ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1791 /ອຄ.ກຂອ

ນະຄອນຫລວງ, ວັນທີ 15 / 9 / 2011

# ແຈ້ງການ

ເຖິງ : ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ.

ເລື່ອງ : ຂັ້ນຕອນການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກໄມ້ປູກ.

- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22/9/2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານ ໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມແຈ້ງການ ຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 284/ຄລບ ລົງວັນທີ 21 ກຸມພາ 2010 ວ່າດ້ວຍການອະນຸມັດສິດ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ເປັນຜູ້ອະນຸຍາດສົ່ງອອກໄມ້ທ່ອນ ແລະ ໄມ້ແປຮູບ ຈາກສວນປູກ ທີ່ບໍ່ແມ່ນໄມ້ຫວງຫ້າມ ແລະ ໄມ້ພິເສດ.
- ອີງຕາມ ຄຳສັ່ງແນະນຳ ກ່ຽວກັບການລົບລ້າງສິ່ງກີດຂວາງທີ່ເປັນອຸປະສັກຕໍ່ການຈໍລະຈອນສິນຄ້າ ເລກທີ 0395/ອຄ ລົງວັນທີ 25/2/2011.
- ອີງຕາມ ແຈ້ງການ ສະບັບເລກທີ 0826/ອຄ.ກຂອ ລົງວັນທີ 03 ພຶດສະພາ 2011 ກ່ຽວກັບການອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ສິນຄ້າ ແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ ຂອງ ສປປລາວ.

ເພື່ອສົ່ງເສີມການນຳໃຊ້ໄມ້ປູກ ກ້າວໄປທົດແທນໄມ້ຈາກປ່າທຳມະຊາດ ໃນຕໍ່ໜ້າ ແລະ ເປັນວັດຖຸດິບປ້ອນໂຮງງານປຸງແຕ່ງໄມ້ ເພື່ອປຸງແຕ່ງເປັນຜະລິດຕະພັນຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ, ເພື່ອສ້າງຄວາມສະດວກໃຫ້ພາກທຸລະກິດ ດ້ວຍການຫລຸດຜ່ອນຂັ້ນຂອດທີ່ບໍ່ຈຳເປັນໃນການດຳເນີນທຸລະກິດການສົ່ງອອກ, ເພື່ອສົ່ງເສີມການປູກໄມ້ໃຫ້ຫລາຍຂື້ນ ແລະ ພ້ອມດຽວກໍ່ໃຫ້ມີການຄຸ້ມຄອງຢ່າງຮັດກຸມ ແລະ ເປັນລະບົບ.

## ລັດຖະມົນຕີ ວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການດັ່ງນີ້ :

ການອອກໃບອະນຸຍາດສົ່ງອອກໄມ້ປູກແຕ່ລະປະເພດໃຫ້ແກ່ ບັນດາບໍລິສັດ/ໂຮງງານ ຕ້ອງແມ່ນໄມ້ທີ່ຢູ່ໃນແຜນການຂຸດຄົ້ນໄມ້ແຕ່ລະປີ ຂອງລັດຖະບານ ແລະ ຕ້ອງປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້ :

1.1 <u>ການຂໍອະນຸຍາດສົ່ງອອກໄມ້ປູກ ທີ່ເປັນ ໄມ້ຫວງຫ້າມ, ໄມ້ພິເສດ ແລະ ໄມ້ຄຸ້ມຄອງ ໃຫ້ປະຕິບັດດັ່ງນີ້</u> :

1.1.1 ບໍລິສັດ/ໂຮງງານປຸງແຕ່ງໄມ້ ແລະ ເພີນິເຈີ ທີ່ຕ້ອງການສົ່ງອອກ ຕ້ອງປະກອບເອກະສານ ເຊັ່ນ : ໃບສະເໜີ ພ້ອມເອກະສານທີ່ກ່ຽວຂ້ອງ ຍື່ນຕໍ່ກະຊວງກະສິກຳ ແລະ ປ່າໄມ້ ເພື່ອກວດກາແຫລ່ງທີ່ມາຂອງໄມ້ຖືກຕ້ອງແລ້ວ, ຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້ ຈະເຮັດໜັງສືຢັ້ງຢືນສົ່ງໃຫ້ ຫ້ອງການ, ກະຊວງ ອຸດສາຫະກຳ ແລະ ການຄ້າ.

1.1.2 ກົມການນຳເຂົ້າ ແລະ ສົ່ງອອກ ຄົ້ນຄ້ວາພິຈາລະນາອອກໃບອະນຸຍາດການສົ່ງອອກໄມ້ປູກ ຕາມລະບຽບການ ບົນພື້ນຖານການສະເໜີ ຂອງຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້.

1.2 <u>ການຂໍອະນຸຍາດສົ່ງອອກໄມ້ປູກ ທີ່ບໍ່ແມ່ນໄມ້ຫວງຫ້າມ, ໄມ້ພິເສດ ແລະ ໄມ້ຄຸ້ມຄອງ ( ໄມ້ວິກ, ໄມ້ກະຖິນນາລົງ ແລະ ໄມ້ກະຖິນເທພາ ) ໃຫ້ປະຕິບັດດັ່ງນີ້</u> :

1.2.1 ບໍລິສັດ/ໂຮງງານປຸງແຕ່ງໄມ້ ແລະ ເພີນິເຈີ ທີ່ຕ້ອງການສົ່ງອອກໄມ້ ຕ້ອງປະກອບເອກະສານ ເຊັ່ນ : ໃບສະເໜີ ພ້ອມເອກະສານທີ່ກ່ຽວຂ້ອງຍື່ນຢູ່ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ເພື່ອກວດກາແຫລ່ງທີ່ມາຂອງໄມ້ ຖືກຕ້ອງແລ້ວ ພະແນກກະສິກຳ ແລະ ປ່າໄມ້ ຈະເຮັດໜັງສືຢັ້ງຢືນສົ່ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.

1.2.2 ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ຄົ້ນຄ້ວາພິຈາລະນາອອກໃບອະນຸຍາດການສົ່ງອອກໄມ້ປູກ ຕາມລະບຽບການ ບົນພື້ນຖານການສະເໜີ ຂອງພະແນກກະສິກຳ ແລະ ປ່າໄມ້.

2. ຂັ້ນຕອນການອະນຸຍາດນຳເຂົ້າໄມ້ປູກ.

2.1 <u>ສຳລັບການນຳເຂົ້າໄມ້ທ່ອນ ແລະ ໄມ້ແປຮູບ</u>.

2.1.1 ບໍລິສັດ/ໂຮງງານປຸງແຕ່ງໄມ້ ແລະ ເພີນິເຈີ ທີ່ຕ້ອງການນຳເຂົ້າໄມ້ ຕ້ອງປະກອບເອກະສານ ເຊັ່ນ : ໃບສະເໜີ ພ້ອມເອກະສານທີ່ກ່ຽວຂ້ອງ ຍື່ນຢູ່ກົມການນຳເຂົ້າ ແລະ ສົ່ງອອກ ເພື່ອຄົ້ນຄ້ວາ ແລະ ພິຈາລະນາ.

2.1.2 ກົມການນຳເຂົ້າ ແລະ ສົ່ງອອກ ອອກໃບອະນຸຍາດນຳເຂົ້າ ຕາມລະບຽບການ.

3. ເອກະສານປະກອບການອະນຸຍາດນຳເຂົ້າ ແລະ ສົ່ງອອກໄມ້ປູກມີ :

3.1 <u>ສຳລັບການສົ່ງອອກໄມ້ປູກ ທີ່ເປັນໄມ້ຫວງຫ້າມ, ໄມ້ພິເສດ ແລະ ໄມ້ຄຸ້ມຄອງ</u>.

3.1.1 ໜັງສືຢັ້ງຢືນແຫລ່ງທີ່ມາຂອງໄມ້ ຈາກຫ້ອງການ, ກະຊວງ ກະສິກຳ ແລະ ປ່າໄມ້.

3.1.2 ສຳເນົາທະບຽນວິສາຫະກິດ ແລະ ທະບຽນອາກອນ ທີ່ອະນຸຍາດໃຫ້ດຳເນີນທຸລະກິດໄມ້.

3.1.3 ບັນຊີໄມ້ ( Log List ) ທີ່ໄດ້ຂຶ້ນບັນຊີ ແລະ ຮັບຮູ້ຈາກພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ.

3.1.4 ໃບຕິດຕາມຕີກາປ່ອຍໄມ້ປູກຈາກຂະແໜງກະສິກຳ ແລະ ປ່າໄມ້.

3.1.5 ໃບເສຍອາກອນ ແລະ ຄ່າທຳນຽມ.

3.2 <u>ສຳລັບການສົ່ງອອກໄມ້ປູກ ທີ່ບໍ່ແມ່ນໄມ້ຫວງຫ້າມ, ໄມ້ພິເສດ ແລະ ໄມ້ຄຸ້ມຄອງ ( ໄມ້ວິກ, ໄມ້ກະຖິນນາລົງ ແລະ ໄມ້ກະຖິນເທພາ ).</u>

3.2.1 ໜັງສືຢັ້ງຢືນແຫລ່ງທີ່ມາຂອງໄມ້ຈາກພະແນກ ກະສິກຳ ແລະ ປ່າໄມ້.

3.2.2 ສຳເນົາທະບຽນວິສາຫະກິດ ແລະ ທະບຽນອາກອນ ທີ່ອະນຸຍາດໃຫ້ດຳເນີນທຸລະກິດໄມ້.

3.2.3 ບັນຊີໄມ້ ( Log List ).

3.2.4 ໃບຕິດຕາມຕີກາປ່ອຍໄມ້ປູກຈາກຂະແໜງກະສິກຳ ແລະ ປ່າໄມ້.

3.2.5 ໃບເສຍອາກອນ ແລະ ຄ່າທຳນຽມ.

3.3 <u>ສຳລັບການອະນຸຍາດນຳເຂົ້າໄມ້ປູກ.</u>

3.3.1 ໃບສະເໜີ.

3.3.2 ເອກະສານຢັ້ງຢືນແຫລ່ງທີ່ມາຂອງໄມ້ຈາກຂະແໜງກະສິກຳ ແລະ ປ່າໄມ້.

3.3.3 ໃບອະນຸຍາດສົ່ງອອກຂອງປະເທດຜູ້ສົ່ງອອກ.

3.3.4 ໃບແຈ້ງລາຄາໄມ້ປູກທີ່ຈະນຳເຂົ້າ.

4. ກຳນົດເວລາສຳລັບ ການພິຈາລະນາຄຳຮ້ອງ.

ໃບຄຳຮ້ອງທີ່ຖືກຕ້ອງ ແລະ ຄົບຖ້ວນ ຈະໄດ້ຮັບການພິຈາລະນາໂດຍທັນທີ ເວັ້ນເສັຍແຕ່ບາງກໍລະນີ ທີ່ມີຄວາມຈຳເປັນຕ້ອງໄດ້ກວດກາຄືນ, ຢ່າງຊ້າບໍ່ເກີນ 30 (ສາມສິບ) ວັນລັດຖະການ, ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

5. ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄົ້ນຄ້ວາ ແລະ ພິຈາລະນາ ອອກໃບອະນຸຍາດສົ່ງອອກໄມ້ປູກ ທີ່ເປັນໄມ້ທ່ອນ ແລະ ໄມ້ແປຮູບ ຊຶ່ງເປັນໄມ້ຫວງຫ້າມ, ໄມ້ພິເສດ ແລະ ໄມ້ຄຸ້ມຄອງໃຫ້ບັນດາບໍລິສັດ/ໂຮງງານ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ກ່ຽວກັບການສົ່ງອອກໄມ້ ບົນພື້ນຖານການຢັ້ງຢືນ ຈາກຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້.

6. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ເປັນຜູ້ຄົ້ນຄ້ວາ ແລະ ພິຈາລະນາອອກໃບອະນຸຍາດສົ່ງອອກໄມ້ປູກທີ່ເປັນໄມ້ທ່ອນ ແລະ ໄມ້ແປຮູບ ( ໄມ້ວິກ, ໄມ້ກະຖິນນາລົງ ແລະ ໄມ້ກະຖິນເທພາ ) ທີ່ບໍ່ແມ່ນໄມ້ຫວງຫ້າມ ແລະ ໄມ້ພິເສດ ໃຫ້ບັນດາບໍລິສັດ/ໂຮງງານ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ກ່ຽວກັບການສົ່ງອອກໄມ້ ບົນພື້ນຖານການຢັ້ງຢືນ ຈາກຂະແໜງກະສິກຳ ແລະ ປ່າໄມ້.

7. ອາຍຸການນຳໃຊ້ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ແລະ ການຂໍຕໍ່ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ

7.1 ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ມີອາຍຸການນຳໃຊ້ 90 ( ເກົ້າສິບ ) ວັນ ແລະ ຈະໝົດອາຍຸການນຳໃຊ້ ໂດຍອັດຕະໂນມັດ ຖ້າວ່າກຳນົດເວລາດັ່ງກ່າວ ຫາກສິ້ນສຸດລົງ.

7.2 ໃນກໍລະນີທີ່ໃບອະນຸຍາດນໍາເຂົ້າ ແລະ ສົ່ງອອກ ຫາກຖືກຕີກເຮ່ຍເສຍຫາຍ, ບໍ່ຖືກນໍາໃຊ້ ຫຼື ຖືກນໍາໃຊ້ແລ້ວ ແຕ່ປະຕິບັດຍັງບໍ່ທັນສໍາເລັດ ພາຍໃນກໍານົດເວລາທີ່ລະບຸໄວ້ ຜູ້ຂໍອະນຸຍາດນໍາເຂົ້າ ແລະ ສົ່ງອອກ ຕ້ອງຍື່ນຄໍາຮ້ອງຂໍຕໍ່ອາຍຸການນໍາໃຊ້ ໃບອະນຸຍາດນໍາເຂົ້າ ແລະ ສົ່ງອອກ ໂດຍຄັດຕິດບົດລາຍງານ ຫລື ໃບຢັ້ງຢືນ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ ແລະ ນະຄອນຫລວງ, ຢູ່ກົມການນໍາເຂົ້າ ແລະ ສົ່ງອອກ, ເພື່ອລົບລ້າງໃບອະນຸຍາດນໍາເຂົ້າ ແລະ ສົ່ງອອກ ສະບັບເກົ່າ ແລະ ອອກໃບອະນຸຍາດນໍາເຂົ້າ ແລະ ສົ່ງອອກ ສະບັບໃໝ່.

7.3 ການຕໍ່ອາຍຸໃບອະນຸຍາດນໍາເຂົ້າ ແລະ ສົ່ງອອກ ແມ່ນສາມາດຕໍ່ໄດ້ 2 ຄັ້ງ ແລະ ມີກໍານົດເວລານໍາໃຊ້ບໍ່ເກີນ 60 ( ຫົກສິບ ) ວັນ/ຄັ້ງ. ຖ້າບໍ່ສາມາດປະຕິບັດໄດ້ຕາມກໍານົດທີ່ກ່າວມາຂ້າງເທິງກໍ່ຖືວ່າສະຫລະສິດແບບອັດຕະໂນມັດ.

8. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ສະບັບເລກທີ 0484/ອຄ.ກຂອ ລົງວັນທີ 5 ມີນາ 2010, ແຈ້ງການ ສະບັບເລກທີ 1887/ອຄ. ກຂອ ລົງວັນທີ 12 ພະຈິກ 2008 ແລະ ລະບຽບການຊື້-ຂາຍໄມ້ຈາກສວນປູກ ສະບັບເລກທີ 1862/ອຄ.ກຂອ ລົງວັນທີ 5 ພະຈິກ 2008. ແລະ ບັນດາແຈ້ງການອື່ນໆ ທີ່ອອກໂດຍກະຊວງອຸດສາຫະກໍາ ແລະ ການຄ້າ ທີ່ປະກາດໃຊ້ໄປກ່ອນໜ້ານີ້ຫາກຂັດກັບແຈ້ງການສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ ວ່າການ

ກະຊວງອຸດສາຫະກໍາ ແລະ ການຄ້າ

ດຣ. ນາມ ວິຍະເກດ

ບ່ອນສົ່ງ :

- ຄະນະນໍາ ກຊ ອຄ "ເພື່ອຊາບ"
- ຫ້ອງວ່າການລັດຖະບານ "ເພື່ອຊາບ"
- ອົງການກວດກາລັດຖະບານ "ເພື່ອຊາບ"
- ກົມພາສີ, ກົມສວ່ຍສາອາກອນ, ກົມຊັບສິນຂອງລັດ, ກະຊວງການເງິນ "ເພື່ອຊາບ "
- ກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້ "ເພື່ອຊາບ"
- ບັນດາກົມອ້ອມຂ້າງ ກະຊວງອຸດສາຫະກໍາ ແລະ ການຄ້າ "ເພື່ອຊາບ ແລະ ປະຕິບັດ"
- ຫ້ອງວ່າການແຂວງ, ນະຄອນຫລວງ "ເພື່ອຊາບ"
- ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ "ເພື່ອແຈ້ງໃຫ້ນັກທຸລະກິດຊາບ"
- ສະມາຄົມອຸດສາຫະກໍາປຸງແຕ່ງໄມ້ແຫ່ງຊາດ "ເພື່ອປະຕິບັດ"
- ສະມາຄົມ ເຟີນີເຈີ ລາວ "ເພື່ອປະຕິບັດ"